

# ບົດທີ 2

# ການເລີ່ມຕົ້ນ



ເດັກເລີ່ມຮຽນຮູ້ທັນທີທັນໃດຫຼັງຈາກເກີດອອກມາ, ໃນຊ່ວງໄວ ອາຍຸ 5 ປີທຳອິດ ເຂົາຈະໄດ້ຮຽນຫຼາຍທັກສະ, ຮຽນໄດ້ໄວ ແລະ ຈື່ງ່າຍກວ່າ ໄລຍະຊີວິດຊ່ວງອື່ນຂອງເຂົາ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ເລີ່ມຕົ້ນເຮັດກິດຈະກຳຊ່ວຍໃຫ້ພັດທະນາການຂອງເຂົາໄວເທົ່າທີ່ຈະໄວໄດ້.

ເຈົ້າອາດຈະເຫັນວ່າກິດຈະກຳມັນຍາກ ເຖິງແມ່ນວ່າຈະຮູ້ວິທີເລີ່ມຕົ້ນເຮັດກິດຈະກຳກັບລູກແລ້ວກໍ່ຕາມ. ໃນບົດນີ້ ແມ່ນໄດ້ຖືກອອກແບບມາເພື່ອຊ່ວຍໃຫ້ເຈົ້າຮູ້ເລີ່ມຕົ້ນ ແລະ ເກັບກຳຂໍ້ມູນຄື:

- ສ້າງຂໍ້ມູນນຳໃຊ້ທີ່ດີທີ່ສຸດໃນປຶ້ມເຫຼັ້ມນີ້.
- ຄັດເລືອກເອົາກິດຈະກຳໃດຄວນຈະເຮັດກ່ອນ.
- ກິດຈະກຳເຫຼົ່ານີ້ມີຄວາມເໝາະສົມໃນຊີວິດປະຈຳວັນ.

## ປຶ້ມເຫຼັ້ມນີ້ຊ່ວຍເຮົາໄດ້ແນວໃດ?.

ໃນປຶ້ມເຫຼັ້ມນີ້ ພວກເຮົາໄດ້ໃຫ້ຂໍ້ມູນບັນດາເຫດຜົນໃນການເຮັດສິ່ງຕ່າງໆ, ບັນດາແນວຄວາມຄິດ ແລະ ການແນະນຳ. ເຈົ້າຈະນຳໃຊ້ປຶ້ມເຫຼັ້ມນີ້ເພື່ອ:

- ເຂົ້າໃຈຄົນຕາບອດ ແລະ ການພັດທະນາການຂອງເຂົາຫຼາຍກວ່າເກົ່າ.
- ເຂົ້າໃຈເຫດຜົນໃນການເຮັດກິດຈະກຳແຕ່ລະຢ່າງ, ນີ້ມັນຈະເຮັດໃຫ້ເຈົ້າດັດແປງກິດຈະກຳໃໝ່ໆ ໄດ້ງ່າຍຂຶ້ນ ແຕ່ຍັງຢູ່ໃນຈຸດປະສົງອັນດຽວກັນ.
- ສຶກສາຈາກພໍ່ແມ່ຄົນອື່ນ ຜູ້ຊຶ່ງລ້ຽງດູລູກທີ່ມີບັນຫາໃນການເບິ່ງເຫັນ.
- ພັດທະນາ ແລະ ຖອດຖອນບົດຮຽນຈາກກິດຈະກຳຕ່າງໆ ເພື່ອມານຳໃຊ້ໃຫ້ໄດ້ຜົນກັບເຈົ້າ ແລະ ລູກ.

## ກິດຈະກຳໃດຄວນເຮັດກ່ອນ?.

ໂດຍປົກກະຕິແລ້ວ ພໍ່ແມ່ທຸກຄົນຄິດຢາກຝຶກເທັກນິກພິເສດກ່ອນວາງແຜນເຮັດກິດຈະກຳ ຊ່ວຍລູກຂອງເຂົາເຈົ້າ, ພໍ່ແມ່ແຕ່ລະຄົນຮູ້ຈັກລູກຂອງເຂົາເຈົ້າດີກວ່າຜູ້ໃດ, ກ່ອນຈະເລືອກເຮັດກິດຈະກຳແຕ່ລະຢ່າງ ເຈົ້າຄວນຖາມຕົນເອງກ່ອນ ດ້ວຍຄຳຖາມດັ່ງຕໍ່ໄປນີ້:

### ມີສິ່ງໃດທີ່ລູກຂອງຂ້ອຍເຮັດບໍ່ໄດ້ຄືກັບເດັກໃນໄວດຽວກັນ?.




ຖ້າລູກເຈົ້າເຮັດບໍ່ໄດ້ຄືກັບລູກຄົນອື່ນ, ສະນັ້ນ ເຈົ້າອາດຈະຕ້ອງໄດ້ໃຊ້ເທັກນິກພິເສດເຂົ້າຊ່ວຍ ໃນການຮຽນຮູ້ທັກສະຕ່າງໆ. ການເລືອກເອົາກິດຈະກຳເຫຼົ່ານີ້ມາເສີມສ້າງທັກສະໃຫ້ລູກເຈົ້າທັນກັບລູກຄົນອື່ນ.

### ພັດທະນາການດ້ານໃດແດ່ ທີ່ຂ້ອຍມີສ່ວນຮ່ວມພິເສດເພື່ອຊ່ວຍລູກໄດ້?.

ບັນຫາເຫຼົ່ານີ້ ອາດຈະເຮັດໃຫ້ລູກຂອງເຈົ້າຫຼ້າຫຼັງກວ່າເດັກຄົນອື່ນ, ເຈົ້າ ແລະ ຄອບຄົວ ອາດຈະເປັນສ່ວນສຳຄັນໃນພັດທະນາການຂອງພວກເຂົາ.




ຂໍ້ມູນເພີ່ມເຕີມກ່ຽວກັບອາຍຸ ແລະ ການຮຽນຮູ້ທັກສະໃໝ່ຂອງເດັກຕາມລຳດັບ, ເບິ່ງຕາຕະລາງພັດທະນາການເລີ່ມຕົ້ນຂອງເດັກ ຢູ່ໜ້າທີ 176.

## ການຊອກຫາກິດຈະກຳທີ່ສາມາດຊ່ວຍເຈົ້າໄດ້.

ເຈົ້າເຄີຍໄດ້ໃຈ້ແຍກກິດຈະກຳທີ່ລູກຕ້ອງການໃຫ້ຊ່ວຍມາແລ້ວ. ສະນັ້ນ ໃຫ້ເຈົ້າເບິ່ງສາລະບານ ຢູ່ໜ້າທີ 5 ເພື່ອຊອກຫາບົດທີ່ມີກິດຈະກຳເໝາະສົມໃນການແກ້ໄຂພັດທະນາການດ້ານນັ້ນ, ແຕ່ລະບົດຈະມີຂໍ້ມູນລະອຽດ ແລະ ກິດຈະກຳຊ່ວຍໃຫ້ລູກຮຽນຮູ້ທັກສະໃໝ່ຕົວຢ່າງ:




ໃນແຕ່ລະບົດກິດຈະກຳທຳອິດ ລ້ວນແລ້ວແຕ່ເປັນທັກສະງ່າຍທີ່ສຸດກ່ອນ ເພື່ອຊ່ວຍໃຫ້ເດັກ ຮຽນທັກສະແຕ່ງ່າຍໆໄປຫາຍາກ. ຖ້າວ່າເດັກໄດ້ເຄີຍຮຽນທັກສະນີ້ມາກ່ອນແລ້ວ, ກໍ່ໃຫ້ເລີ່ມຕົ້ນຮຽນທັກສະຖັດໄປ ເຊິ່ງເປັນທັກສະທີ່ຍາກກວ່າເກົ່າຢູ່ໃນບົດ. ຖ້າວ່າລູກ ຂອງເຈົ້າສາມາດເຮັດທັກສະທີ່ມີໃນບົດນັ້ນແລ້ວ ໃຫ້ເລີ່ມຕົ້ນຝຶກທັກສະຖັດຈາກທັກສະທີ່ລາວເຄີຍເຮັດມາກ່ອນໂດຍທັນທີ. ຖ້າລາວບໍ່ຮູ້ຈັກທັກສະ ໃຫ້ເລີ່ມຕົ້ນຝຶກທັກສະທຳອິດໃນບົດກ່ອນ.

ພະຍາຍາມປະຕິບັດການຝຶກທັກສະຕາມລຳດັບທີ່ໄດ້ລະບຸໄວ້ຢູ່ໃນບົດ. ມັນສຳຄັນເພາະວ່າເດັກ ມີການພັດທະນາທັກສະໄປເທື່ອລະຂັ້ນຕາມລຳດັບຢ່າງແນ່ນອນ. ເຈົ້າຕ້ອງພະຍາຍາມສອນລູກຮຽນ ທັກສະທີ່ຍາກ ຫຼັງຈາກທີ່ໄດ້ຮຽນທັກສະນ້ອຍໆ ແລະ ງ່າຍກ່ອນ, ເພື່ອບໍ່ເຮັດໃຫ້ເຈົ້າ ແລະ ລູກຜິດຫວັງ.

## ຂ້ອຍຈະເຮັດວິທີໃດ ເພື່ອເຮັດໃຫ້ກິດຈະກຳເຫຼົ່ານີ້ແທດເໝາະກັບຊີວິດປະຈຳວັນ ຂອງຄອບຄົວຂ້ອຍ?.

ສິ່ງສຳຄັນເຮົາຕ້ອງໄດ້ຄຳນຶງເຖິງຜົນກະທົບໃນການເຮັດກິດຈະກຳຊ່ວຍ ເຊິ່ງມັນບໍ່ແຕະຕ້ອງວຽກຂອງເຈົ້າ, ສ້າງກິດຈະກຳໃນແຕ່ລະມື້ໃຫ້ເປັນການຮຽນຮູ້ປະສົບການ, ສອນລູກດ້ວຍວິທີງ່າຍໆ ສຳລັບເຈົ້າ ແລະ ບໍ່ໃຊ້ເວລາພິເສດເພື່ອສອນລູກກໍ່ໄດ້.



**ອະທິບາຍສຽງ ແລະ ກິ່ນ ໃຫ້ລູກຟັງ ເມື່ອເຈົ້າໄປຕະຫຼາດ**



**ເວົ້າກັບລູກໃນຂະນະທີ່ເຈົ້າກຳລັງເຮັດວຽກວ່າເຮັດແບບໃດແດ່.**

## ທຸກຄົນມີສ່ວນຮ່ວມໃນການເຮັດກິດຈະກຳເຫຼົ່ານີ້.

ຊຸກຍູ້ໃຫ້ສະມະຊິກໃນຄອບຄົວ, ເພື່ອນບ້ານ ແລະ ໝູ່ເພື່ອນມີສ່ວນຮ່ວມນຳກັນ, ຄົນທີ່ຢູ່ໃກ້ກໍ່ຕ້ອງຊ່ວຍ, ແຕ່ວ່າ ພວກເຂົາເຈົ້າອາດຈະລຳບາກໃຈ ເພາະວ່າເຂົາເຈົ້າບໍ່ຮູ້ວ່າຈະຊ່ວຍແນວໃດ?, ເຈົ້າຕ້ອງແລກປ່ຽນບົດຮຽນທີ່ເຈົ້າຮູ້ກ່ຽວກັບຄົນທີ່ມີບັນຫາທາງສາຍຕາ, ມີກິດຈະກຳໃດແດ່ທີ່ເຈົ້າ ແລະ ລູກກຳລັງເຮັດ ແລະ ບອກເຫດຜົນວ່າ ເປັນຫຍັງຈຶ່ງເຮັດກິດຈະກຳເຫຼົ່ານີ້.




ເດັກຕາດີຍັງຊ່ວຍເດັກຕາບອດໄດ້ ຖ້າວ່າເຈົ້າສະແດງວິທີເຮັດໃຫ້ເຂົາເຈົ້າເບິ່ງ ມີພຽງແຕ່ເຈົ້າອະທິບາຍໃຫ້ເຂົາເຈົ້າຮູ້ຈັກດັດແປງເກມການຫຼິ້ນໃຫ້ເໝາະສົມແກ່ເດັກຕາບອດ. ຫຼັງຈາກນັ້ນ, ກະຕຸກຊຸກຍູ້ໃຫ້ເຂົາເຈົ້າຄົ້ນຄິດຫາວິທີການໃໝ່ໆດ້ວຍຕົວຂອງເຂົາເຈົ້າເອງ.

